ເລກທີ 0509
ວັນທີ 30 DEC 2011

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**************

ລັດຖະບານ ເລກທີ 478 /ລບ

ນະຄອນຫຼວງວຽງຈັນ, ວັນທີ 13.12.2011

# ດຳລັດ

## ວ່າດ້ວຍການດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ ຂອງຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍສັນຊາດລາວ ສະບັບເລກທີ 05/ສພຊ, ລົງວັນທີ 17 ພຶດສະພາ 2004;
- ອີງຕາມກົດໝາຍວ່າດ້ວຍຄອບຄົວ ສະບັບປັບປຸງ ເລກທີ 05/ສພຊ, ລົງວັນທີ 26 ກໍລະກົດ 2008;
- ອີງຕາມກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບປັບປຸງເລກທີ 12 /ສພຊ, ລົງວັນທີ 27 ພະຈິກ 2009;
- ອີງຕາມໜັງສືສະເໜີ ສະບັບເລກທີ 06689/ຕປທ,ກກສ.1, ລົງວັນທີ 15 ພະຈິກ 2011 ຂອງກະຊວງການຕ່າງປະເທດ.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາການພິຈາລະນາ ແລະ ອະນຸຍາດໃຫ້ຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດ ດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຖືກຕ້ອງຕາມລະບຽບກົດໝາຍ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ການດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ**

ການດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ແມ່ນການອາໄສ, ຕັ້ງພູມລຳເນົາ, ທຳມາຫາກິນ ຫຼື ປະກອບອາຊີບຢູ່ ສປປ ລາວ ໂດຍບໍ່ມີກຳນົດເວລາຂອງຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດ ຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພົນລະເມືອງລາວ** ໝາຍເຖິງ ບຸກຄົນທີ່ຖືສັນຊາດລາວຕາມກົດໝາຍວ່າດ້ວຍສັນຊາດລາວ;
2. **ຄົນຕ່າງດ້າວ** ໝາຍເຖິງ ບຸກຄົນ ທີ່ຖືສັນຊາດອື່ນ ແຕ່ເຂົ້າມາອາໄສ, ຕັ້ງຖິ່ນຖານ, ທຳມາຫາກິນ ຢູ່ ສປປ ລາວ ຢ່າງຖາວອນ, ຖືບັດຕ່າງດ້າວ ແລະ ລັດຖະບານຂອງຄົນຕ່າງດ້າວນັ້ນ ກໍຍັງຮັບຮູ້ຜູ້ກ່ຽວຢ່າງເປັນທາງການຢູ່;
3. **ຄົນຕ່າງປະເທດ** ໝາຍເຖິງ ບຸກຄົນທີ່ຖືສັນຊາດອື່ນ ຊຶ່ງເຂົ້າມາ ສປປ ລາວ ເພື່ອປະຕິບັດໜ້າທີ່ໃດໜຶ່ງ ໂດຍມີກຳນົດ, ເມື່ອໝົດກຳນົດແລ້ວກໍກັບຄືນ;
4. **ຄົນບໍ່ມີສັນຊາດ** ໝາຍເຖິງ ບຸກຄົນຊຶ່ງບໍ່ແມ່ນພົນລະເມືອງລາວ ແລະ ບໍ່ສາມາດຢັ້ງຢືນວ່າຕົນມີສັນຊາດໃດ;
5. **ຄົນເຊື້ອຊາດລາວ** ໝາຍເຖິງ ບຸກຄົນທີ່ກຳເນີດມາຈາກພໍ່ ແລະແມ່ ທີ່ມີເຊື້ອຊາດລາວ.

**ມາດຕາ 4. ນະໂຍບາຍຂອງລັດຖະບານ**

ລັດຖະບານແຫ່ງ ສປປ ລາວ ອະນຸຍາດໃຫ້ຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຕາມບົດບັນຍັດຂອງດຳລັດສະບັບນີ້ ໂດຍໄດ້ຮັບການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ, ສົນທິສັນຍາ ແລະສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5. ພັນທະຂອງຜູ້ດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ**

ຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດໃຫ້ດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ນັ້ນ ຕ້ອງປະຕິບັດພັນທະ ດັ່ງນີ້:

1. ເຄົາລົບລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ;
2. ປະຕິບັດລະບຽບການອອກແຮງງານ, ການດຳລົງຊີວິດຂອງສັງຄົມ;
3. ເຄົາລົບຮີດຄອງປະເພນີ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
4. ເສັຍພາສີ ແລະ ສ່ວຍສາອາກອນໃຫ້ລັດຕາມລະບຽບກົດໝາຍ;
5. ປົກປັກຮັກສາ, ສ້າງສາ, ພັດທະນາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ;
6. ປະຕິບັດພັນທະອື່ນໆ ຕາມລະບຽບກົດໝາຍ.

ມາດຕາ 6. ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດ ທີ່ຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ, ບຸກຄົນ ແລະ ການຈັດຕັ້ງທີ່ມີໜ້າທີ່ຮັບຜິດຊອບວຽກງານດັ່ງກ່າວນີ້.

# ໝວດທີ 2
# ເງື່ອນໄຂການຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ

ມາດຕາ 7. ເງື່ອນໄຂຂອງຜູ້ທີ່ຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ

ຜູ້ທີ່ມີຈຸດປະສົງຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຕ້ອງບໍ່ຖືກຕັດສິນລົງໂທດຕັດອິດສະລະພາບຍ້ອນການກະທຳຜິດໂດຍເຈດຕະນາມາກ່ອນ ແລະ ຕ້ອງມີເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ອາໄສ ຢູ່ ສປປ ລາວ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ ຢ່າງຕໍ່ເນື່ອງ ແຕ່ ສິບປີ ຂຶ້ນໄປ;
2. ຄົນເຊື້ອຊາດລາວ:
   - ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ທີ່ເກີດຢູ່ ສປປ ລາວ ແລະ ເຄີຍຖືສັນຊາດລາວ ແລະ ມີເຊື້ອຊາດລາວໂດຍກຳເນີດມາກ່ອນແລ້ວ;
   - ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດທີ່ເກີດຢູ່ຕ່າງປະເທດ ພ້ອມດ້ວຍລູກ,ຫຼານ ຊຶ່ງມີພໍ່, ແມ່ ທີ່ເກີດຢູ່ ສ ປປ ລາວ ແລະ ເຄີຍຖືສັນຊາດລາວໂດຍກຳເນີດມາກ່ອນແລ້ວ;
   - ຄົນຕ່າງປະເທດທີ່ມີພໍ່ ຫຼື ແມ່ເປັນພົນລະເມືອງລາວ.
3. ພໍ່, ແມ່ ຫຼື ລູກ ຂອງຄົນຕ່າງດ້າວ ຊຶ່ງມີທີ່ຢູ່ຖາວອນຢູ່ ສປປ ລາວແຕ່ ສິບ ປີ ຂຶ້ນໄປ;
4. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ແຕ່ງດອງກັບພົນລະເມືອງລາວ ຢ່າງຖືກຕ້ອງຕາມລະບຽບກົດໝາຍແລ້ວນັ້ນ ຕ້ອງໄດ້ອາໄສຢູ່ ສປປ ລາວ ຢ່າງຕໍ່ເນື່ອງ ແຕ່ ສອງປີ ຂຶ້ນໄປ;
5. ຜູ້ລົງທຶນຕ່າງປະເທດ ທີ່ມາລົງທຶນໃນໂຄງການ ຊຶ່ງມີທຶນຈົດທະບຽນແຕ່ຫ້າແສນໂດລາສະຫະລັດຂຶ້ນໄປໂດຍມີກິດຈະການທີ່ໝັ້ນຄົງ, ດຳເນີນກິດຈະການຢ່າງຕໍ່ເນື່ອງແຕ່ ຫ້າປີ ຂຶ້ນໄປ ແລະ ປະຕິບັດພັນທະເສຍພາສີ, ສ່ວຍສາອາກອນໃຫ້ລັດຕາມລະບຽບກົດໝາຍ ຂອງ ສປປ ລາວ;
6. ຜູ້ທີ່ມີຄວາມຮູ້ດ້ານວິຊາສະເພາະຂັ້ນຊ່ຽວຊານທີ່ ສປປ ລາວ ຕ້ອງການ;
7. ຜູ້ທີ່ລັດຖະບານ ແຫ່ງ ສປປ ລາວ ໃຫ້ສິດພິເສດ;
8. ຜູ້ທີ່ມີຄຸນງາມຄວາມດີ ໃນການປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາ ສປປ ລາວ ທີ່ມີໜັງສືຢັ້ງຢືນຜົນງານ ແລະ ການເຄື່ອນໄຫວຕົວຈິງດັ່ງກ່າວນັ້ນ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ.

# ໝວດທີ 3
# ຂັ້ນຕອນການອະນຸຍາດ

**ມາດຕາ 8. ການຍື່ນຄຳຮ້ອງ**

ຜູ້ທີ່ມີຈຸດປະສົງຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຕ້ອງປະກອບຄຳຮ້ອງສະເໜີຜ່ານຕາມຂັ້ນ ຕອນ ດັ່ງນີ້:

1. ສຳລັບບຸກຄົນທີ່ດຳລົງຊີວິດຢູ່ປະເທດທີ່ມີສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ປະຈຳຢູ່ ແມ່ນໃຫ້ສະເໜີຜ່ານ ແລະໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ປະຈຳປະເທດທີ່ຕົນອາໄສຢູ່;
2. ສຳລັບບຸກຄົນ ທີ່ດຳລົງຊີວິດຢູ່ປະເທດ ທີ່ບໍ່ມີສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ປະຈຳຢູ່, ບຸກຄົນທີ່ໄດ້ກຳນົດໄວ້ໃນຂໍ້ 1, ຂໍ້ 4, ຂໍ້ 5 ແລະ ຂໍ້ 7 ຂອງມາດຕາ 7 ຂອງດຳລັດສະບັບນີ້ ແລະ ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດທີ່ມີເຊື້ອຊາດລາວ ຊຶ່ງມີອາຍຸແຕ່ ຫົກສິບຫ້າປີ ຂຶ້ນໄປ ທີ່ເຂົ້າມາພັກຢູ່ ສປປ ລາວ ແລ້ວ ໃຫ້ຍື່ນຄຳຮ້ອງຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຕໍ່ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ.

**ມາດຕາ 9. ເອກະສານປະກອບການຍື່ນຄຳຮ້ອງ**

ເອກະສານປະກອບການຍື່ນຄຳຮ້ອງຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ມີດັ່ງນີ້:

1. ໜັງສືຄຳຮ້ອງຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຂຽນດ້ວຍຕົນເອງ 3 ສະບັບ;
2. ໜັງສືສະເໜີຈາກສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ທີ່ຕົນດຳລົງຊີວິດຢູ່ ຍົກເວັ້ນບຸກຄົນທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕາ 8 ຂອງດຳລັດສະບັບນີ້ 3 ສະບັບ;
3. ຊີວະປະຫວັດ 3 ສະບັບ;
4. ໃບແຈ້ງໂທດ 3 ສະບັບ;
5. ໜັງສືຢັ້ງຢືນສຸຂະພາບ ທີ່ອອກໃຫ້ໂດຍໂຮງໝໍສູນກາງ, ແຂວງ ຂອງ ສປປ ລາວ ຫຼື ໂຮງໝໍທີ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ປະຈຳຕ່າງປະເທດ ບ່ອນຕົນດຳລົງຊີວິດຢູ່ 3 ສະບັບ;
6. ໜັງສືຢັ້ງຢືນຖານະທາງດ້ານເສດຖະກິດ 3 ສະບັບ;
7. ໜັງສືຢັ້ງຢືນບ່ອນທີ່ຈະອາໄສຢູ່ ສປປລາວ 3 ສະບັບ;
8. ໜັງສືຢັ້ງຢືນສາຍກ່ຽວພັນກັບພົນລະເມືອງລາວ ສຳລັບບຸກຄົນທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕາ 7 ຂອງດຳລັດສະບັບນີ້ 3 ສະບັບ;
9. ໜັງສືຢັ້ງຢືນຮັບຮອງການເປັນຊ່ຽວຊານສຳລັບບຸກຄົນທີ່ໄດ້ກຳນົດໄວ້ໃນຂໍ້ 6 ຂອງມາດຕາ 7 ຂອງດຳລັດສະບັບນີ້ 3 ສະບັບ;

10. ໜັງສືຢັ້ງຢືນຜົນງານ ແລະ ການເຄື່ອນໄຫວວຽກງານສໍາລັບບຸກຄົນທີ່ໄດ້ກໍານົດໄວ້ໃນ ຂໍ້ 8 ຂອງມາດ ຕາ 7 ຂອງດໍາລັດສະບັບນີ້ 3 ສະບັບ;
11. ສໍາເນົາໜັງສືຜ່ານແດນ 3 ສະບັບ;
12. ສໍາເນົາບັດປະຈໍາຕົວ 3 ສະບັບ;
13. ສໍາເນົາໃບຢັ້ງຢືນການເກີດ ຫຼື ສໍາເນົາໃບຢັ້ງຢືນຄວາມເປັນພໍ່ ຫຼືແມ່ 3 ສະບັບ;
14. ໃບຢັ້ງຢືນການເອົາເດັກມາເປັນລູກລ້ຽງ (ຖ້າມີ) 3 ສະບັບ;
15. ໃບຢັ້ງຢືນການແຕ່ງດອງ (ຖ້າມີ) 3 ສະບັບ;
16. ສໍາເນົາໜັງສືຢັ້ງຢືນກ່ຽວກັບການອະນຸຍາດລົງທຶນ ສໍາລັບນັກລົງທຶນ 3 ສະບັບ;
17. ຮູບຂະໜາດ 4 x 6 ຈໍານວນ 6 ແຜ່ນ.

**ມາດຕາ 10. ການຄົ້ນຄວ້າ ແລະ ພິຈາລະນາ**

ການພິຈາລະນາຄໍາຮ້ອງຂໍດໍາລົງຊີວິດຢູ່ ສປປ ລາວ ຢ່າງຖາວອນໃຫ້ປະຕິບັດ ດັ່ງນີ້:

1. ກະຊວງການຕ່າງປະເທດ ເປັນຜູ້ຄົ້ນຄວ້າ ແລະ ປະກອບຄໍາເຫັນຕໍ່ຄໍາຮ້ອງຂອງບຸກຄົນ ທີ່ສະເໜີຂໍດໍາລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ. ຫຼັງຈາກນັ້ນໃຫ້ນໍາສົ່ງກະຊວງປ້ອງກັນຄວາມສະຫງົບ ເພື່ອພິຈາລະນາ;

2. ກະຊວງປ້ອງກັນຄວາມສະຫງົບ ປະກອບຄໍາເຫັນຕໍ່ບົດຄົ້ນຄວ້າຂອງ ກະຊວງການຕ່າງປະເທດ ທີ່ສະເໜີມານັ້ນແລ້ວຕອບຄືນໄປໃຫ້ ກະຊວງການຕ່າງປະເທດຢ່າງເປັນລາຍລັກອັກສອນ;

3. ເມື່ອໄດ້ຮັບຄໍາເຫັນດີ ຈາກກະຊວງປ້ອງກັນຄວາມສະຫງົບແລ້ວ ໃຫ້ກະຊວງການຕ່າງປະເທດ ແຈ້ງໃຫ້ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ປະຈໍາຢູ່ຕ່າງປະເທດ ເພື່ອອອກວີຊາຖາວອນເຂົ້າມາດໍາລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ. ສໍາລັບຄົນຕ່າງປະເທດທີ່ເຂົ້າມາອາໄສຢູ່ ສປປ ລາວ ແລ້ວນັ້ນ ໃຫ້ກະຊວງປ້ອງກັນຄວາມສະຫງົບເປັນຜູ້ອອກໜັງສືແຈ້ງໃຫ້ຜູ້ກ່ຽວຊາບພ້ອມທັງແຈ້ງໃຫ້ ກະຊວງການຕ່າງປະເທດຊາບນໍາ;

4. ສໍາລັບບຸກຄົນທີ່ລັດຖະບານໃຫ້ສິດພິເສດນັ້ນ ມອບໃຫ້ກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບສົມທົບກັນຄົ້ນຄວ້າ ແລ້ວນໍາສະເໜີໃຫ້ລັດຖະບານພິຈາລະນາ;

5. ກໍານົດເວລາໃນການຄົ້ນຄວ້າ ແລະ ພິຈາລະນາເອກະສານຂໍດໍາລົງຊີວິດຢູ່ ສປປ ລາວ ຢ່າງຖາວອນບົນພື້ນຖານເອກະສານຄົບຖ້ວນ ແມ່ນປະຕິບັດຕາມແຕ່ລະຂັ້ນ ດັ່ງນີ້:

**ກ. ສໍາລັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ບໍ່ແມ່ນຄົນເຊື້ອຊາດລາວ**

- ອົງການປົກຄອງບ້ານ ຊ້າສຸດບໍ່ໃຫ້ເກີນ ຫ້າວັນ ລັດຖະການ;
- ປກສ ເມືອງ ຊ້າສຸດບໍ່ໃຫ້ເກີນ ສິບຫ້າວັນ ລັດຖະການ;
- ປກສ ແຂວງ, ນະຄອນ ຊ້າສຸດບໍ່ໃຫ້ເກີນ ຊາວວັນ ລັດຖະການ;
- ອົງການປົກຄອງແຂວງ, ນະຄອນ ຊ້າສຸດບໍ່ໃຫ້ເກີນ ສາມສິບວັນ ລັດຖະການ;

- ສະຖານເອກອັກຄະລັດຖະທູດ ຫຼືສະຖານກົງສຸນໃຫຍ່ ຊ້າສຸດບໍ່ໃຫ້ເກີນ ສີ່ສິບຫ້າວັນ ລັດຖະການ;
- ກະຊວງການຕ່າງປະເທດ ຊ້າສຸດບໍ່ໃຫ້ເກີນ ສາມສິບວັນ ລັດຖະການ;
- ກະຊວງປ້ອງກັນຄວາມສະຫງົບ ຊ້າສຸດບໍ່ໃຫ້ເກີນ ສີ່ສິບຫ້າວັນ ລັດຖະການ.

ຂ. ສໍາລັບຄົນເຊື້ອຊາດລາວ ຕາມທີ່ ໄດ້ກໍານົດໄວ້ໃນ ຂໍ້ 2 ຂອງມາດຕາ 7 ຂອງດໍາລັດສະບັບນີ້

- ອົງການປົກຄອງບ້ານ ຊ້າສຸດບໍ່ໃຫ້ເກີນ ຫ້າວັນ ລັດຖະການ;
- ປກສ ເມືອງ ຊ້າສຸດບໍ່ໃຫ້ເກີນ ຫ້າວັນ ລັດຖະການ;
- ປກສ ແຂວງ, ນະຄອນ ຊ້າສຸດບໍ່ໃຫ້ເກີນ ສິບວັນ ລັດຖະການ;
- ອົງການປົກຄອງແຂວງ, ນະຄອນ ຊ້າສຸດບໍ່ໃຫ້ເກີນ ສິບວັນ ລັດຖະການ;
- ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ຊ້າສຸດບໍ່ໃຫ້ເກີນ ຊາວວັນ ລັດຖະການ;
- ກະຊວງການຕ່າງປະເທດ ຊ້າສຸດບໍ່ໃຫ້ເກີນ ເຈັດວັນ ລັດຖະການ;
- ກະຊວງປ້ອງກັນຄວາມສະຫງົບ ຊ້າສຸດບໍ່ໃຫ້ເກີນ ສາມສິບວັນ ລັດຖະການ.

**ມາດຕາ 11. ການອອກ ແລະ ການລົບລ້າງໜັງສືອະນຸຍາດ**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ອອກ ຫຼື ລົບລ້າງໜັງສືອະນຸຍາດໃຫ້ດໍາລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຕາມບົດບັນຍັດຂອງດໍາລັດສະບັບນີ້.

**ມາດຕາ 12. ການຄຸ້ມຄອງຜູ້ທີ່ໄດ້ຮັບອະນຸຍາດໃຫ້ດໍາລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດໃຫ້ດໍາລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ ດ້ວຍການອອກປຶ້ມສໍາມະໂນຄົວ ແລະ ບັດປະຈໍາຕົວຄົນຕ່າງດ້າວໃຫ້ບຸກຄົນດັ່ງກ່າວ, ພ້ອມທັງມອບໝາຍໃຫ້ເຈົ້າໜ້າທີ່ ແລະ ອົງການປົກຄອງທ້ອງຖິ່ນບ່ອນທີ່ຜູ້ກ່ຽວດໍາລົງຊີວິດຢູ່ນັ້ນ ເປັນຜູ້ຮັບຜິດຊອບຄຸ້ມຄອງ.

## ໝວດທີ 4
## ຄ່າທໍານຽມ ແລະ ຄ່າບໍລິການວິຊາການ

ມາດຕາ 13. ຄ່າທໍານຽມ ແລະ ຄ່າບໍລິການວິຊາການ

ຄ່າທໍານຽມ ແລະ ຄ່າບໍລິການວິຊາການ ການອອກໜັງສືອະນຸຍາດ ແລະ ການຄົ້ນຄວ້າເອກະສານຂອງຄົນຕ່າງປະເທດ, ຄົນເຊື້ອຊາດລາວ ແລະ ຄົນບໍ່ມີສັນຊາດ ທີ່ຂໍມາດໍາລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 14. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼື ອົງການຈັດຕັ້ງໃດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 15. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ອົງການຈັດຕັ້ງໃດ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ປະຕິບັດມາດຕະການທາງດ້ານບໍລິຫານ, ຮັບຜິດຊອບຄ່າເສຍຫາຍທາງແພ່ງ, ຖືກປັບໃໝ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

ສຳລັບຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດໃຫ້ດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນແລ້ວນັ້ນ ຫາກໄດ້ກະທຳຜິດຕໍ່ຄວາມໝັ້ນຄົງ ຫຼື ສ້າງຄວາມເສຍຫາຍອັນໃຫຍ່ຫຼວງຕໍ່ຜົນປະໂຫຍດຂອງຊາດ ຫຼື ຖືກຕັດອິດສະລະພາບແຕ່ ຫ້າປີ ຂຶ້ນໄປຈະຖືກລົບລ້າງການອະນຸຍາດໃຫ້ດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ແລະ ຖືກເນລະເທດອອກຈາກ ສປປ ລາວ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 16. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ ກຳນົດລະບຽບການລະອຽດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງຕ່າງໆ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ